**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 24 ມີຖຸນາ 2007 ( 06-24-2007 )**

---

## <u>ຈົ່ງຟື້ນການອຸທິດຕົນໃນວັນນີ້:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ພຣະບັນຍັດສອງ 29:10-15; 30:1-3, 6, 11-14, 19-20

**<u>ຄຳຖາມແຫ່ງຊີວິດ:</u>** ຂ້າພະເຈົ້າຈະຕ້ອງເຮັດຢ່າງໃດເພື່ອຈະຟື້ນຟູການອຸທິດຕົນຕໍ່ພຣະເຈົ້າໄດ້?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ເມື່ອຄົນທີ່ເຊື່ອມາຫາພຣະເຈົ້າທີ່ບ່ອນນະມັສການ, ພວກເຂົາຕ້ອງສວຍເອົາໂອກາດນັ້ນເພື່ອຟື້ນຟູການອຸທິດຕົນຂອງພວກເຂົາຕໍ່ພຣະອົງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຂຽນຂຶ້ນມາເພື່ອຊ່ອຍທ່ານໃຫ້ເພີ້ມພູນການອຸທິດຕົນຕໍ່ພຣະເຈົ້າດ້ວຍ:

- ເຂົ້າໃຈວ່າພຣະເຈົ້າຕ້ອງການໃຫ້ທ່ານເລືອກເອົາການຮັກພຣະອົງ ແລະ
- ຍອມຮັບວ່າຈະຮັກພຣະເຈົ້າດ້ວຍສຸດຈິດສຸດໃຈຂອງທ່ານ.

**ການຈັດຕຽມຂອງຄຣູ**

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>**ແຜນການສອນ**</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

**ແຜນການສອນ**

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ອະທິບາຍ:</u>** ສຶກສາພຣະຄັມພີແລ້ວຈົດຈໍ່ເລີ້ມຕົ້ນເຂົ້າເຝົ້າພຣະເຈົ້າໃໝ່.

- ເຊັ່ນ: ວັດຖຸໃນຄອບຄົວ ( ເງິນ, ເຄື່ອງໃຊ້) ທີ່ກຳລັງຕ້ອງການໃຫ້ມັນສົດໃສຂຶ້ນມາອີກເພື່ອຈະໃຊ້ໃຫ້ເປັນປໂຍດໄດ້ຢູ່, ແຕ່ມັນເກົ່າເສົ້າໝອງໄປ ເຮົາຕ້ອງນຳມາຜັດດ້ວຍນ້ຳຢາໃຫ້ມັນເຫລື້ອມໃສຂຶ້ນມາອີກໄດ້. ເຊັ່ນດຽວກັນພວກເຮົາກໍຕ້ອງຕິດພັນເຂົ້າເຝົ້າພຣະເຈົ້າເປັນປະຈຳເພື່ອຄວາມເຫລື້ອມໃສສັດທາໃນພຣະເຈົ້າຢູ່ທຸກເວລາ.

### 1. <u>ຈົ່ງກັບມາຫາພຣະເຈົ້າ:</u> ( ພບຢ 29:10-15)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 29:10-15

2) **ແນະນຳ:** ພຣະທັມຕອນນີ້ໄດ້ຊີ້ໃຫ້ພວກເຮົາເຫັນວ່າມີຄົນຫລາຍຣະດັບ ຫລາຍປະເພດໄດ້ພາກັນມາຢືນຢູ່ຕໍ່ໜ້າໂມເຊ (ຂໍ້ 10,11) ເພື່ອຮັບຟັງຄຳກ່າວບອກຂອງໂມເຊ.

3) ໂມເຊໄດ້ຊີ້ບອກທຸກຄົນຕັ້ງແຕ່ ຂັ້ນຜູ້ນຳຈົນເຖິງຂ້ອຍຂ້າໃຊ້ໃນທີ່ນັ້ນວ່າ ການເຕົ້າໂຮມຂອງພວກເຮົາຄັ້ງນີ້ ບໍ່ພຽງແຕ່ຕ້ອງການສະເພາະຜູ້ນຳຊື່ ໆ, ເຕ່ຕ້ອງການໃຫ້ຄວາມສັມພັນໃນພຣະເຈົ້າຂອງພວກເຮົາສົດຊື່ນແຈ່ມໃສຂຶ້ນອີກ.

4) ໃນພຣະຄັມພີໃໝ່ພຣະເຢຊູຄຣິດເຈົ້າຮັບເອົາຄົນທຸກຄົນທີ່ເຂົ້າມາເຊື່ອເພິ່ງໃນພຣະອົງດ້ວຍການເຊື່ອຟັງຜູ້ນັ້ນ.

5) ໃຫ້ນະມັສການພຣະເຈົ້າທຸກ ໆ ອາທິດ, ສຶກສາພຣະຄັມພີດ້ວຍຕົນເອງເປັນປະຈຳ.

6) ການນະມັສການເປັນການຟື້ນຟູໃນການຍອມຮັບພຣະເຈົ້າຂອງພວກເຮົາໃຫ້ເຂັ້ມແຂງຂຶ້ນທຸກວັນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ( ພບຢ 29:10-15)

1. ທ່ານຈະແບ່ງປັນຄວາມຄິດເຫັນຂອງທ່ານກ່ຽວກັບການກັບມາຫາພຣະເຈົ້າຕໍ່ທຸກຄົນຢ່າງໃດ?
2. ທ່ານນຈະໜູນຈິດໜູນໃຈໃຫ້ກັບຜູ້ທີ່ອຸທິດຕົນຕໍ່ພຣະເຈົ້າດ້ວຍວິທີໃດ?
3. ໃນຂໍ້ທີ 12 ແມ່ນໃຜສ້າງຄຳສັນຍາ ແລະແມ່ນໃຜຕັ້ງກຳນົດເວລາໃນຄຳສາບານນັ້ນ?
4. ພວກເຮົາຄວນເຂົ້າໃຈໃນການນຳພາຂອງພຣະອົງໄດ້ຢ່າງໃດ?
5. ພຣະເຈົ້າໄດ້ສັນຍາກັບອັບຣາຮາມ ( ປຖມກ 12:2-3; 15:1 ) ກັບອີຊາກ ( ປຖມກ 26:2-5) ແລະ ກັບຢາໂຄບ ( ປຖມກ 28:13-15) ຄຳສັນຍາເຫລົ່ານີ້ໄດ້ມີມາເຖິງພວກເຮົາໃນສມັຍນີ້ຢ່າງໃດ?

## 2. <u>ຈົ່ງກັບມາຟັງຄວາມພຣະເຈົ້າຢ່າງສຸດໃຈ:</u> (ພບຢ 30:1-3,6 )

1) ຂໍໃຫ້ອາສາສມັກອ່ານພຣະທັມ ພບຢ 30:1-3,6

2) ພຣະເຈົ້າໄດ້ຊົງໃຫ້ທ່ານໂເໂຊຈົດບັນທຶກຂໍ້ຄວາມຕ່າງ ໆ ໃນຄວາມສັມພັນຣະຫວ່າງຊົນຊາດອິສຣາເອນ ແລະພຣະເຈົ້າ.

3) ໃນເວລາຄົນອິສຣາເອນພົບກັບປັນຫາພຣະເຈົ້າໄດ້ເຕືອນເຂົາໂດຍອ້າງຄຳສັນຍາທີ່ພຣະອົງຊົງໃຫ້ກັບບັນພະບູຣຸດຂອງເຂົາເພື່ອໃຫ້ເຂົາກັບມາຟັງຄວາມອີກ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ພບຢ 30:1-3,6

1. ທ່ານໄດ້ໃຫ້ຄຳໝັ້ນສັນຍາຕໍ່ພຣະເຈົ້າຫຍັງແດ່?
2. ເວລາທ່ານເຫີນຫ່າງຈາກພຣະເຈົ້ານັ້ນ, ພຣະອົງໃຫ້ໂອກາດທ່ານ ແລະນຳທ່ານກັບມາໃຫ້ມີຄວາມສຳພັນກັບພຣະອົງໃຫ້ໃນທາງໃດ?
3. ມັນເປັນການຍາກສຳລັບທ່ານທີ່ຈະຍອມຮັບພຣະເຈົ້າ ແລະຟັງຄວາມພຣະອົງໃນຊີວິດຂອງທ່ານບໍ່?
4. ທ່ານຈະຍອມຮັບເອົາການເຊື່ອຟັງພຣະເຈົ້າຢູ່ບໍ່?

## 3. <u>ຈົ່ງຮູ້ວ່າທ່ານສາມາດເຂົ້າໃຈ ແລະຟັງຄວາມ:</u> ( ພບຢ 30:11-14)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 30:11-14

2) ດຶງຄວາມສົນໃຈຂອງນັກຮຽນມາເບິ່ງວ່າລູກທີ່ບໍ່ຍອມຟັງຄວາມຂອງພໍ່ແມ່ (ເຊັ່ນ: ຂ້ອຍລືມ ຫລື ຂ້ອຍກຳລັງຫລິ້ນຢູ່) ຄຳຖາມມີຢູ່ວ່າ: ແມ່ນຫຍັງທີ່ຜູ້ໃຫຍ່ຄວນໃຊ້ ເພື່ອໃຫ້ເດັກນ້ອຍກັບມາຍອມຮັບແລະຟັງຄວາມພຣະເຈົ້າໄດ້?

3) ຜູ້ທີ່ຕິດຕາມພຣະເຈົ້າຮູ້ພຣະປະສົງຂອງພຣະອົງ, ແຕ່ບໍ່ຍອມຮັບເປັນເພາະເຫດອັນໃດ?

4) ຜູ້ທີ່ເຊື່ອບາງຄົນເວົ້າວ່າ " ພຣະອົງເຈົ້າຂ້າ ຂ້ານ້ອຍບໍ່ສາມາດເຮັດໃນສິ່ງທີ່ພຣະອົງບອກໃຫ້ຂ້ານ້ອຍເຮັດ ນີ້ມັນເປັນການຖືເບົາຂອງການໄວ້ວາງໃຈໃນພຣະອົງ. ພວກເຮົາຕ້ອງເຊື່ອໃນສິ່ງທີ່ພຣະອົງຕັດສັ່ງ ແມ່ນຫຍັງກໍຕາມທີ່ພຣະເຈົ້າສັ່ງນັ້ນ ພວກເຮົາສາມາດເຮັດໄດ້ທັງນັ້ນ. ພຣະອົງຊົງໃຫ້ອະພັຍແກ່ພວກເຮົາໂດຍທາງພຣະເຢຊູຄຣິດ

ແລະພລັງອໍານາດຂອງພຣະອົງກໍສະຖິດໃນເຮົາ, ພຣະວິນຍານບໍຣິສຸດຈະຮັບປະກັນການຍອມຮັບຟັງຕາມພຣະປະສົງຂອງພຣະອົງໃນທຸກ ໆ ກໍຣະນີ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ພບຢ 30:11-14

1. ຄໍາແນະນໍາທີ່ພຣະເຈົ້າໃຫ້ທ່ານນັ້ນມີອັນໃດທີ່ຍາກທີ່ສຸດສໍາລັບທ່ານ? ທ່ານໄດ້ຍອມເຮັດຕາມບໍ່?
2. ຖ້າທ່ານຮູ້ສຶກວ່າທ່ານບໍ່ຮູ້ພຣະປະສົງຂອງພຣະອົງ ແລ້ວມັນເປັນຄວາມຜິດຂອງທ່ານຫລືຂອງພຣະເຈົ້າ?
3. ທ່ານຈະຊອກຫາການແນະນໍາຂອງພຣະເຈົ້າໄດ້ຢ່າງໃດ?
4. ຄຣິສຕຽນຫລາຍຄົນຮູ້ສຶກວ່າເຂົາໄດ້ຄໍາແນະນໍາທີ່ດີຈາກພຣະເຈົ້າໃນຊີວິດຂອງເຂົາຈາກ ສິດຍາພິບານຫລືຄຣູ. ທ່ານມີທາງປະຕິເສດໄດ້ຢູ່ບໍ່?

## 4. <u>ຈົ່ງເລືອກເອົາຊີວິດໃນວັນນີ້:</u> ພຣະບັນຍັດສອງ 30:19-20

1) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 30:19-20

2) ຂຽນ "**ຊີວິດຢູ່ ຫລື ຄວາມຕາຍ** "ໃສ່ກະດານໃຫ້ເລືອກເອົາອັນນຶ່ງທ່ານຈະເລືອກເອົາອັນໃດ?

**ຄໍາຖາມ:** 1. ອີງຕາມຂໍ້ທີ່ 20, ມະນຸດຈະຮູ້ໄດ້ຢ່າງໃດວ່າ: ຖ້າຈະໃຫ້ເຂົາເລືອກເອົາຊີວິດ ຫລືເອົາຄວາມຕາຍໃນມື້ນີ້ນັ້ນເຂົາຈະຕັດສິນໃຈເອົາອັນໃດ?

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> ພບຢ 30:17-20

1. ໃນພຣະທັມ ມັດທາຍ 5:14 ໄດ້ບັນລະຍາຍເຖິງເຣື່ອງນີ້ແນວໃດ?
2. ໃນຂໍ້ທີ 19 ກໍຍັງໄດ້ຖາມວ່າ: ທ່ານຈະເລືອກເອົາຊີວິດ ຫລື ຄວາມຕາຍ?
3. ມັນເປັນບັນຫາສໍາລັບທ່ານບໍ່ທີ່ຈະເລືອກເອົາການມີຊີວິດເຂົ້າມາໃນຊີວິດຂອງທ່ານ?

## <u>ບົດຮຽນພຣະຄໍາແຫ່ງຄວາມຈິງ:</u>

- ມັນເປັນຄວາມສໍາຄັນທີ່ສຸດທີ່ພຣະເຈົ້າໃຫ້ມະນຸດມາຫາພຣະອົງ ແລະຍອມຮັບຟັງຄໍາແນະນໍາຂອງພຣະອົງ.
- ພຣະເຈົ້າມີພຣະປະສົງຢາກໃຫ້ຜູ້ທີ່ເຊື່ອທຸກຄົນຍອມສາຣະພາບບາບ ແລະມາເລີ້ມຕົ້ນມີສັມພັນກັບພຣະອົງ ແລະກັບຄືນມາເຊື່ອຟັງພຣະອົງດ້ວຍສຸດຈິດສຸດໃຈ.
- ແມ່ນຫຍັງກໍຕາມທີ່ພຣະເຈົ້າແນະນໍາໃຫ້ຜູ້ທີ່ເຊື່ອເຮັດ ເຂົາກໍຈະເຮັດໄດ້ໝົດ.
- ຈົ່ງຕັດສິນໃຈຕິດຕາມອົງພຣະຜູ້ເປັນເຈົ້າ ແລະທໍາຕາມຄໍາແນະນໍາຂອງພຣະອົງໃນມື້ນີ້, ເພື່ອເປັນການເລືອກທີ່ຖືກຕ້ອງ ແລະໃຫ້ມີຄວາມຊົມຊື່ນຍິນດີໃນຊີວິດຄຣິສຕຽນຂອງທ່ານ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH